# ວັນນະຄະດີລາວ - ການກຳເໜີດ ການຂະຫຍາຍຕົວ ການສຶກສາຄົ້ນຄວ້າ

# 10

## ບູ ໄຊຍະສິດທິວົງ

ພາສາລາວ-ວັນນະຄະດີ ເປັນມໍລະດົກວັດທະນະທຳຂອງຊາດລາວ ທີ່ມະຫາວິທະຍາໄລແຫ່ງຊາດ ໄດ້ຈັດເຂົ້າໃນໂຄງການຫລັກສູດ ໃນການຄົ້ນຄວ້າສຶກສາຮ່ຳຮຽນເປັນວິຊາຕົ້ນຕໍ ໃນພາກວິຊາພາສາລາວ-ວັນນະຄະດີ. ປັດຈຸບັນນີ້ ມະຫາວິທະຍາໄລໄດ້ຈັດລະບົບການຮຽນ 5 ປີ, 2 ປີ ຮຽນຢູ່ວິທະຍາໄລວິທະຍາສາດພື້ນຖານ ແລະ 3 ປີ ຮຽນຢູ່ພາກວິຊາ ຄື ປີທີ 3-4-5. ວິຊາພາສາລາວ-ວັນນະຄະດີ ເປັນວິຊາໜຶ່ງທີ່ສຳຄັນ ໃຫ້ສິດສອນໃນວິທະຍາໄລວິທະຍາສາດພື້ນຖານ ນັກສຶກສາຈະສຶກສາສາຍທຳມະຊາດ ຫລື ສາຍສັງຄົມ ກໍຕ້ອງໄດ້ຮຽນ ຖືວ່າເປັນວິຊາບັງຄັບໃຫ້ນັກສຶກສາທຸກຄົນຈະຕ້ອງໄດ້ຮຽນ. ແຕ່ສະເພາະໃນພາກວິຊາພາສາລາວ-ວັນນະຄະດີ ວິຊາຕົ້ນຕໍກໍແມ່ນພາສາລາວ-ວັນນະຄະດີ ໃນທີ່ນີ້ ຂ້າພະເຈົ້າຈະສະເໜີ ການຮຽນ-ການສອນ ໃນພາກວິຊາ. ວິຊາວັນນະຄະດີທີ່ພວກເຮົາໃຊ້ສິດສອນ ແລະ ຄົ້ນຄວ້າໃນພາກວິຊາ ພວກເຮົາຈັດອອກເປັນ 3 ສະໄໝ ຫລື ໄລຍະ ໂດຍອີງຕາມເຫດການປະຫວັດສາດແຫ່ງການກຳເນີດ ແລະ ການຂະຫຍາຍຕົວຂອງສັງຄົມລາວ ທີ່ວັນນະຄະດີສ່ອງແສງໃຫ້ເຫັນ

ໃນສາມສະໄໝ, ສະໄໝຕົ້ນພວກເຮົາເອີ້ນວ່າ ວັນນະຄະດີພື້ນເມືອງ, ວັນນະຄະດີສະໄໝນີ້ ເປັນວັນນະຄະດີທີ່ເລີ້ມຕົ້ນກ່ອນໝູ່ ເນື້ອຫາສາລະມີຄວາມກະທັດຮັດງ່າຍດາຍ ບໍ່ສັບສົນ ຕົວລະຄອນຢູ່ໃນເລື່ອງໜ້ອຍ ເຊິ່ງເລົ່າຕໍ່ກັນມາດ້ວຍປາກຕໍ່ປາກ ມີທັງຄຳກອນ ແລະ ຄຳທຳມະດາ ເຊິ່ງແຕ່ລະຊົນເຜົ່າຕ່າງໆ ຫາກຄິດປະດິດແຕ່ງຂຶ້ນ ອີງຕາມສະພາບຕົວຈິງ ຕາມຄວາມສຳນຶກ ແລະ ຄວາມຮອບຮູ້ຂອງຄົນໃນຍຸກສະໄໝນັ້ນ ເຊັ່ນ ເທບນິຍາຍ ແມ່ນເລື່ອງທີ່ເລົ່າເຖິງການປະພຶດການເຄື່ອນໄຫວຂອງຕົວລະຄອນ, ຕົວລະຄອນຂອງເທບນິຍາຍ ກໍເປັນແຖນ, ພະອິນ, ພົມ ແລະ ຜີສາງຕ່າງໆ ຕາມແນວຄິດຂອງຄົນບູຮານສັງຄົມປະຖົມມາຊົບ (ສະຫະຊີບ) ຖືວ່າເທບນິຍາຍ ແມ່ນຮູບການປະດິດແຕ່ງທີ່ເກີດຂຶ້ນກ່ອນໝູ່ ເຊິ່ງຕິດພັນກັບການເຄື່ອນໄຫວວຽກງານຕົວຈິງ ການດຳລົງຊີວິດ ການເຊື່ອຖືຮີດຄອງປະເພນີ ແລະ ວັດທະນະທຳທາງດ້ານຈິດໃຈ ຈາກນັ້ນ ກໍມີພື້ນສືບ ກໍຄືກັບເທບນິຍາຍ ແຕ່ຕ່າງກັນຢູ່ບ່ອນວ່າ ພື້ນສືບເລົ່າກ່ຽວກັບບຸກຄົນ ຈຸ້ມເຈົ້ອເຊື້ອສາຍ ແລະ ຖືກເລົ່າຕໍ່ໆ

ກັນມາທຸກທ້ອງຖິ່ນ, ເຂດ ເຊິ່ງມີລັກສະນະສັງຄົມຈະແຈ້ງ ຈາກນັ້ນ ກໍມີນິທານອັດສະຈັນ, ນິທານຊວນຫົວ, ນິທານສັດ. ນອກຈາກນີ້ ກໍຍັງມີວັນນະຄະດີປະເພດຄຳກອນ ເຊັ່ນ ຄຳໂສກ (ໂສກກອງ, ໂສກປຸກເຮືອນ, ໂສກປູກໝາກໄມ້ ... ), ຄຳໂອມ, ຄຳທວາຍ, ສຸພາສິດ, ຜະຫຍາ. ຂັບ-ລຳ-ເຊີ້ງ ແລະ ການສະແດງພື້ນເມືອງ (ລຳເລື່ອງ) ທັງໝົດນີ້ ຈັດເຂົ້າໃນວັນນະຄະດີພື້ນເມືອງ ແຕ່ການຕໍ່ເນື່ອງກັນລະຫວ່າງ ວັນນະຄະດີພື້ນເມືອງ ແລະ ວັນນະຄະດີສະໄໝລ້ານຊ້າງ ບາງບັນຫາກໍມີການຖົກຖຽງກັນຢູ່ວ່າ ຈັດຢູ່ໃນສະໄໝໃດ? ເຊິ່ງພວກເຮົາກໍໄດ້ຈັດສຳມະນາກັນຄັ້ງນຶ່ງແລ້ວ ມີນັກວິຊາການຫລາຍທ່ານ ມີຄວາມເຫັນຫລາກຫລາຍ ແຕກຕ່າງກັນອອກໄປ ແຕ່ຕາມທັດສະນະຂອງຂ້າພະເຈົ້າແລ້ວ ການກຳໜົດວັນນະຄະດີສອງໄລຍະນີ້ ບັນຫາທີ່ເປັນຫລັກແມ່ນການໃຊ້ສັບພາສາທີ່ເກົ່າແກ່ງ່າຍດາຍ ກະທັດຮັດ ບໍ່ມີພາສາບາລີສັນສະກິດປົນເປຢູ່ນຳ ສ່ວນວັນນະຄະດີສະໄໝລ້ານຊ້າງ ເປັນວັນນະຄະດີນຳໃຊ້ ພາສາບາລີ-ສັນສະກິດ ປົນຢູ່ກັບພາສາລາວຫລາຍ

ສະໄໝທີສອງ ແມ່ນວັນນະຄະດີສະໄໝລ້ານຊ້າງ ວັນນະຄະດີສະໄໝນີ້ ພວກເຮົາໄດ້ກຳນົດເອົາແຕ່ສະຕະວັດທີ 14 ຄ.ສ. 1353 ເປັນຕົ້ນມາ ຈົນຮອດສະຕະວັດທີ 19 ຄ.ສ. 1893

ສະໄໝທີສາມ ເປັນວັນນະຄະດີສະໄໝໃໝ່ ຫລືເອີ້ນອີກຢ່າງນຶ່ງວ່າ ວັນນະຄະດີປັດຈຸບັນ ເຊິ່ງກຳໜົດແຕ່ປີ 1893 ຈົນຮອດປັດຈຸບັນ. ວັນນະຄະດີສະໄໝໃໝ່ ຫລືວັນນະຄະດີປັດຈຸບັນຂອງລາວ ປາກົດຕົວຂຶ້ນມາຫລ້າຊ້າກວ່າປະເທດເພື່ອນບ້ານ ຄື ລຸນຫລັງສົງຄາມໂລກຄັ້ງທີສອງນີ້ເອງ. ສາເຫດທີ່ຫລ້າຊ້າ ກໍເນື່ອງຈາກສະພາບຄວາມເປັນຈິງຂອງປະເທດລາວ ທີ່ສູນເສຍເອກະລາດ ແລະ ຢູ່ໃນສະພາບທີ່ຫລົ້ມຈົມ ເພພັງ ເວລາຝຣັ່ງເຂົ້າມາ ວຽງຈັນເປັນເມືອງຮ້າງ ມີແຕ່ຊາກສະຫລັກຫັກພັງ ເຫລືອໄວ້ໃຫ້ເຫັນຢູ່ທົ່ວໄປ

ການສຶກສາໂດຍທົ່ວໄປ ກໍມີແຕ່ຢູ່ໃນວັດວາເທົ່ານັ້ນ ແລະ ໂຮງຮຽນປະຖົມຕາມລະບົບຂອງຝຣັ່ງເສດຫາກໍຕັ້ງຂຶ້ນໃນປີ 1902 ຄູກໍແມ່ນຄູຝຣັ່ງ ແລະ ຫວຽດນາມ, ສອນກໍສອນພາສາຝຣັ່ງ ຈົນເຖິງປີ 1924 ຈຶ່ງມີການສອນພາສາລາວໃນຊັ້ນປະຖົມ ສະເພາະໃນວັນຈັນ ແລະວັນສຸກ ວັນລະ 1 ຊົ່ວໂມງ[1] ປີ1922 ມີໂຮງຮຽນມັດທະຍົມ. ສະນັ້ນ ກ່ອນສົງຄາມໂລກຄັ້ງທີສອງນັ້ນ ປັນຍາຊົນຄົນລາວ ຈົບຈາກຕ່າງປະເທດ ເຖິງມີກໍບໍ່ພໍເທົ່າໃດຄົນ ຮູ້ພາສາລາວກໍພໍອ່ານອອກຂຽນໄດ້ ບໍ່ສາມາດສ້າງວັນນະກຳພາສາລາວໄດ້ ດັ່ງນັ້ນ ຈຶ່ງຂຽນໜັງສືເປັນພາສາຝຣັ່ງ ເລື່ອງທີ່ຂຽນກໍແມ່ນກ່ຽວກັບວັດທະນະທຳ, ສັງຄົມ ແລະ ປະຫວັດສາດ, ເລື່ອງຕະຫລົກກໍມີ ປະເພດເລົ່າກັນໃນວົງເຫລົ້າ

---

[1] ຄວາມຊົງຈຳຂອງ ທ່ານ ພູມີ ວົງວິຈິດ

ເວລາຜ່ານໄປຫລາຍປີ ການສອນພາສາລາວກໍຍັງຈຳກັດຢູ່ຂັ້ນປະຖົມ, ພາຍຫລັງສົງຄາມໂລກຄັ້ງທີສອງ ປີ 1947 ຈຶ່ງມີການຕັ້ງມັດທະຍົມຕອນປາຍຂຶ້ນເປັນເທື່ອທຳອິດ ທີ່ວຽງຈັນ ແຕ່ຕ້ອງໄປເສັງຈົບທີ່ຮ່າໂນ້ຍ. ພາຍຫລັງສົງຄາມໂລກຄັ້ງທີສອງນີ້ເອງ ທີ່ມີການສອນພາສາລາວໃນລະດັບມັດທະຍົມ ແຕ່ເປັນວິຊາເລືອກ. ໜັງສືພິມລາຍສັບປະດາກໍເກີດຂຶ້ນໃນໄລຍະປີ 1940-45 ເຊິ່ງເອີ້ນວ່າ "ຈົດໝາຍເຫດລາວໃຫຍ່" ໜັງສືພິມໄດ້ສະເໜີບົດຄວາມ, ບົດກະວີ ທີ່ມີເນື້ອໃນຟື້ນຟູປະເທດຊາດ ແລະ ທີ່ພິເສດກໍພິມນະວະນິຍາຍສະໄໝໃໝ່ "ໜັງສືອ່ານຫລິ້ນ" ຄື ພະພຸດທະຮູບສັກສິດ (1944) ແຕ່ງໂດຍ ລາວຈິນດາມະນີ ອັນເປັນນາມປາກກາ ຂອງທ່ານສົມຈິນ ປ.ເງິນ ແລະ ພິມເປັນເຫລັ້ມເທື່ອທຳອິດ ໃນປີ ຄ.ສ. 1966

ມາຮອດປີ 1958 ຈຶ່ງມີວາລະສານ "ເມືອງລາວ" ເຊິ່ງເປັນວາລະສານເອກະຊົນສະບັບທຳອິດ. ຈາກວາລະສານສະບັບນີ້ ຈຶ່ງມີນັກຂຽນສະໝັກຫລິ້ນ ສະເໜີຜົນງານອອກສູ່ສາຍຕາມະຫາຊົນ. ນັກຂຽນທີ່ຮູ້ກັນດີກໍຄື ດວງຈຳປາ (ດາຣາ ວິລະວົງ ກັນລະຍາ) ແຕ່ວາລະສານນີ້ຢູ່ໄດ້ບໍ່ພໍເທົ່າໃດປີ ກໍຍຸບລົງ ວັນນະກຳໃນຊຸມປີ 1960, ຖືວ່າເປັນບາດກ້າວສຳຄັນໃນການສ້າງສັນວັນນະຄະດີສະໄໝໃໝ່ ມີການຕຳນິໂຈມຕີຄວາມບໍ່ຍຸຕິທຳໃນສັງຄົມ ແຕ່ກໍບໍ່ຮຸນແຮງ ແລະ ບໍ່ບັງອາດໄປແຕະຕ້ອງອຳນາດບາດໃຫຍ່ ເພາະຄຳວ່າ ປະຊາທິປະໄຕໃນປະເທດດ້ອຍພັດທະນານັ້ນ ມີເງົາຂອງຜະເດັດການຄວບຄຸມຢູ່. ສະພາບຂອງສັງຄົມໂດຍທົ່ວໄປ ເປັນສັງຄົມເຄິ່ງສັກດີນາ ເຄິ່ງເມືອງຂຶ້ນ. ວັນນະຄະດີເຊິ່ງເປັນແວ່ນສະທ້ອນສັງຄົມນັ້ນ ຈຶ່ງບໍ່ສາມາດເວົ້າໄດ້ວ່າກ້າວເຂົ້າສູ່ກະແສສັດຈະທັດເທື່ອ

ສ່ວນຢູ່ເຂດແນວລາວຮັກຊາດນັ້ນ ວັນນະຄະດີ ແລະ ບົດເລື່ອງສັ້ນ ເລື່ອງຍາວ ຮັບການຊີ້ນຳຈາກອົງການຈັດຕັ້ງການເມືອງ ປະເພດວັນນະຄະດີທີ່ແຜ່ຫລາຍກໍຄື ບົດກະວີ (ກອນຂັບລຳ, ກອນອ່ານ) ເຊິ່ງພິມເຜີຍແຜ່ອອກໃນໜັງສືພິມ ນັກກະວີທີ່ຢູ່ແຖວໜ້າກໍມີ ທ່ານ ພູມີ ວົງວິຈິດ, ສ.ເດຊາຄຳພູ, ສີຊະນະ ສີສານ, ຄຳລຽງ ພົນເສນາ, ສຸວັນທອນ ບຸບຜານຸວົງ, ຈັນທີ ເດືອນສະຫວັນ ... ເນື້ອໃນຂອງບົດກະວີເວົ້າເຖິງການຕໍ່ສູ້ກູ້ຊາດ ການປຸກລະດົມຂົນຂວາຍມວນຊົນ ໃຫ້ລຸກຂຶ້ນຕໍ່ສູ້ທັບມ້າງແອກຄອບຄອງຂອງສັກດີນາ ແລະ ພວກລ່າເມືອງຂຶ້ນ. ໃນໄລຍະນີ້ ມີບົດວັນນະກຳເກີດຂຶ້ນຢ່າງກວ້າງຂວາງ ເຊັ່ນ ເລື່ອງນະວະນິຍາຍ ເພື່ອໃຫ້ປະຊາຊົນໄດ້ອ່ານ ໄດ້ຮັບຮູ້ຄວາມພິລະອາດຫານຂອງນັກຮົບປະຕິວັດ ແລະ ໄຊຊະນະອັນຍິ່ງໃຫຍ່ຂອງປະເທດຊາດ. ປັດຈຸບັນນັກຂຽນວັນນະຄະດີສະໄໝໃໝ່ ກໍຍັງສືບຕໍ່ຂຽນຢ່າງກວ້າງຂວາງ ໂດຍນັກຂຽນທັງສອງເຂດໄດ້ເຂົ້າຮ່ວມການສ້າງສັນວັນນະຄະດີ ເພື່ອສ່ອງແສງສັງຄົມໃໝ່ ລະບອບໃໝ່ ສ.ປ.ປ. ລາວ

ລວມເປັນສາມໄລຍະ ທີ່ມີເນື້ອຫາສາລະແຕກຕ່າງກັນພໍສົມຄວນ ຕາມແຕ່ລະໄລຍະປະຫວັດສາດ ແລະ ຕົວຈິງຂອງປະຫວັດສາດ

ວັນນະຄະດີສະໄໝລ້ານຊ້າງ ແມ່ນພາກສ່ວນນຶ່ງຂອງວັນນະຄະດີແຫ່ງຊາດລາວ ເຊິ່ງພວກເຮົາເອີ້ນຊື່ ວັນນະຄະດີໄລຍະນີ້ ຕາມຊື່ຂອງອານາຈັກລ້ານຊ້າງ ເຊິ່ງເອີ້ນກັນມາແຕ່ສະໄໝການທ້ອນໂຮມລາວຂອງ ພະເຈົ້າຟ້າງຸ່ມມະຫາຣາດ ແຕ່ສະຕະວັດທີ 14 ຈົນຮອດຣາຊະການຂອງເຈົ້າອະນຸວົງ ຫລື (ໄຊຍະເຊດຖາ ທິຣາດ ທີ 3) ໃນຕົ້ນສະຕະວັດທີ 19 (1804)

ໃນໄລຍະທີ່ຊາດເອີ້ນຊື່ວ່າ ອານາຈັກລ້ານຊ້າງນີ້ ໂດຍສະພາວະຄວາມເປັນຈິງຂອງປະຫວັດສາດ ພວກເຮົາສາມາດແບ່ງໄລຍະປະຫວັດສາດອອກເປັນສອງໄລຍະຈະແຈ້ງ ຄື ໄລຍະພັດທະນາ ແລະ ໄລຍະເສື່ອມ ໂຊມ. ໄລຍະພັດທະນາ ຫລືໄລຍະຕົ້ນ ແຕ່ສະຕະວັດທີ 14-17 ອານາຈັກລ້ານຊ້າງ ໄດ້ມີການພັດທະນາ ປັບປຸງ ຮອບດ້ານ ມີຄວາມຈະເລີນຮຸ່ງເຮືອງສູງສຸດ ໂດຍສະເພາະ ທາງດ້ານວັດທະນະທຳຕະຫລອດ 4 ສະຕະວັດ ກວ່າໆ. ໄລຍະທີ 2 ຄືໄລຍະເສື່ອມໂຊມ ແຕ່ທ້າຍສະຕະວັດທີ 18 ເຖິງທ້າຍສະຕະວັດທີ 19 (1893)

ໄລຍະພັດທະນາ ເປັນໄລຍະທີ່ບົດວັນນະກຳມີການຂະຫຍາຍຕົວຢ່າງກວ້າງຂວາງ ແລະ ຮອບດ້ານ ໃນສັງຄົມ ບັນດາບົດປະພັນວັນນະຄະດີທີ່ເດັ່ນໆ ທີ່ຍັງເປັນທີ່ນິຍົມຊົມຊອບຂອງສັງຄົມ ຈົນເຖິງປັດຈຸບັນ ກໍຍັງມີຢ່າງຫລວງຫລາຍ ເຊັ່ນ ໜັງສືເລື່ອງ ສັງສິນໄຊ, ການະເກດ, ຈຳປາສີ່ຕົ້ນ ... ບົດວັນນະກຳທີ່ເກົ່າແກ່ ກວ່າໝູ່ກໍແມ່ນ "ຄຳໂອວາດຂອງເຈົ້າຟ້າງຸ່ມ" ເຊິ່ງຂຽນຂຶ້ນລະຫວ່າງກາງສະຕະວັດທີ 14 (1357) ແລະຖືກ ປະກາດໃຊ້ ເມື່ອເຈົ້າຟ້າງຸ່ມຈັດທຳການສະຫລອງໄຊຊະນະອັນສົມບູນ ໃນການທ້ອນໂຮມປະເທດຊາດໃຫ້ເປັນ ອານາຈັກລ້ານຊ້າງເອກະພາບ ໃນປີ 1357 ທີ່ວຽງຈັນ

ວັນນະຄະດີລາວແຕ່ສະຕະວັດທີ 14 ເຖິງທ້າຍສະຕະວັດທີ 17 ອາດສັບຊ້ອນເປັນພາກສ່ວນໃຫຍ່ ຄື ວັນນະຄະດີທີ່ມີເນື້ອໃນກ່ຽວກັບປະຫວັດສາດ, ວັນນະຄະດີເຜີຍແຜ່ສາສະໜາທີ່ມີເນື້ອໃນສຶກສາອົບຮົມກ່ຽວກັບ ສິນທຳຕ່າງໆ ເອີ້ນວ່າ ວັນນະຄະດີຄຳສອນ, ວັນນະຄະດີທີ່ເປັນຄຳກອນ, ນິຍາຍເພີນຈິດແບບບູຮານ (ເອີ້ນວ່າກະວີນິຍາຍ). ວັນນະຄະດີປະຫວັດສາດແມ່ນພາກສ່ວນທີ່ລວມມີບົດ ປະພັນຕ່າງໆ ທີ່ມີເນື້ອໃນ ປະຫວັດສາດ ບົດບັນທຶກ, ພົງສາວະດານ ບາງເທື່ອກໍສະເໜີໄລຍະປະຫວັດສາດຕ່າງໆຢ່າງຕໍ່ເນື່ອງກັນ ດ້ວຍຮູບການວັນນະຄະດີ ພັນລະນາແບບງ່າຍດາຍໂດຍກົງ ເບິ່ງແລ້ວຄືແມ່ນຕົວຈິງປະຫວັດສາດ ແຕ່ຄວາມ ຈິງແລ້ວ ມັນພຽງສ່ອງແສງເຖິງເຫດການປະຫວັດສາດຕາມຄວາມເຂົ້າໃຈ ແລະ ລັກສະນະຂອງຕົນເອງ

ຜູ່ແຕ່ງໄດ້ສ້າງຮູບແບບວັນນະຄະດີຂຶ້ນ ເຊິ່ງໃນນັ້ນມີບາງຄວາມຈິງປະຫວັດສາດ, ແຕ່ມີບາງຄວາມສຳນຶກຂອງຜູ່ແຕ່ງ ແຕ່ບາງເທື່ອກໍມີທັງຮູບພາບມະຫັດສະຈັນຂອງເທບນິຍາຍ ແລະ ພື້ນສືບທີ່ມີມາແຕ່ບູຮານະການ

ຈາກຄຳໂອວາດຂອງເຈົ້າຟ້າງຸ່ມແລ້ວ ມາຮອດສະຕະວັດທີ 15 ພະມະຫາເທບຫລວງໄດ້ແຕ່ງເລື່ອງນິທານຂຸນບູລົມສະບັບທຳອິດຂຶ້ນ ຕໍ່ເນື່ອງກັນມາເຖິງຫ້າສະບັບ ແຕ່ເນື້ອໃນພື້ນຖານກໍເປັນອັນໜຶ່ງອັນດຽວກັນ ຄື ຢືນຢັນຄວາມເປັນເອກະລາດອັນສັກກາລະບູຊາຂອງຊາດລາວ ບົນຜືນແຜ່ນດິນອັນອຸດົມສົມບູນ

ໃນບັນດາບົດປະພັນວັນນະຄະດີຕ່າງໆ ຂອງສະໄໝລ້ານຊ້າງນີ້ ສ່ວນໃຫຍ່ໄດ້ບັນທຶກຂີດຂຽນດ້ວຍຕົວອັກສອນທັມ ຫລືພວກເຮົາເອີ້ນວ່າຕົວທັມ ເຊິ່ງເປັນທີ່ຮູ້ກັນດີໃນທົ່ວອານາຈັກລ້ານຊ້າງ ຕະຫລອດຮອດທົ່ວພາກຕາເວັນອອກສຽງເໜືອຂອງໄທ ອັນສອນທັມ ຄືກັນກັບຢູ່ວຽງຈັນທັງໝົດ ເຊິ່ງແຕກຕ່າງຈາກຕົວອັກສອນທັມລ້ານນາແດ່ເລັກນ້ອຍ. ພວກເຮົາສາມາດຈຳແນກຄວາມແຕກຕ່າງກັນໄດ້ ຍ້ອນຈຸດພິເສດຂອງວັນນະຄະດີໄລຍະນີ້ ພາກວິຊາພາສາລາວ-ວັນນະຄະດີ, ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ ໄດ້ມີໂຄງການຫລັກສູດສອນ ບາລີ-ສັນສະກິດ ແລະ ອັກສອນທັມ ສຳລັບສອນຢູ່ລະດັບປີທີ 3-4 ຂອງແຕ່ລະຊຸດຮຽນ ໂດຍນຳເອົາທິດສະດີໃນການຂຽນອ່ານຕ່າງໆ ຕະຫລອດເຖິງນຳເອົາຕົວຈິງ ຂອງໜັງສືຜູກໃບລານເລື່ອງຕ່າງໆ ມາໃຫ້ນັກສຶກສາອ່ານ ເພື່ອໃຫ້ນັກສຶກສາມີຄວາມສາມາດນຳໃຊ້ໃນການຄົ້ນຄວ້າວັນນະຄະດີສະໄໝນີ້ໄດ້.

ຜ່ານມາ ພາກວິຊາພາສາລາວ-ວັນນະຄະດີ ກໍເອົາໃຈໃສ່ສຶກສາຄົ້ນຄວ້າວັນນະຄະດີສະໄໝນີ້ ນຳໃຊ້ເຂົ້າໃນການຮ່ຳຮຽນ ແລະ ຈັດຕັ້ງໜ່ວຍຄົ້ນຄວ້າວັນນະຄະດີສະໄໝອານາຈັກລ້ານຊ້າງຊຸດໂຊມ ໃນເບື້ອງຕົ້ນພວກເຮົາເລັ່ງໃສ່ສາມເລື່ອງ ຄື ສານລືບພະສູນ, ກາບເມືອງພວນ ແລະ ພື້ນວຽງຈັນ. ພວກເຮົາໄດ້ຄົ້ນຄວ້າສຳເລັດແລ້ວ 2 ເລື່ອງ ຄື: ກາບເມືອງພວນ ແລະ ສານລືບພະສູນ ເຊິ່ງໄດ້ເຜີຍແຜ່ ແລະແຈກຢາຍໄປໃນທົ່ວປະເທດ ເພື່ອທຳການສຶກສາຮ່ຳຮຽນ ແລະ ອີກບໍ່ດົນພວກເຮົາກໍຈະໄດ້ປຶ້ມພື້ນວຽງ ປັດຈຸບັນກຳລັງຢູ່ໃນໄລຍະສຸດທ້າຍ ຄື ການກວດແກ້ ນະທີ່ນີ້ ຂ້າພະເຈົ້າຕາງໜ້າໃຫ້ພາກວິຊາພາສາລາວ-ວັນນະຄະດີ ສະແດງຄວາມຂອບອົກຂອບໃຈມາຍັງ ມູນນິທິໂຕໂຍຕ້າ ແຫ່ງປະເທດຍີ່ປຸ່ນ ທີ່ໄດ້ໃຫ້ທຶນສະໜັບສະໜູນ ໃນການຄົ້ນຄວ້າ ແລະ ຈັດພິມ, ແລະໃນຕໍ່ໜ້າພວກເຮົາກໍຍັງມີຫລາຍໂຄງການທີ່ຈະສືບຕໍ່ເກັບກຳ ແລະ ຄົ້ນຄວ້າ ເຊັ່ນ: ວັນນະຄະດີພື້ນເມືອງ ເຊິ່ງເປັນວັນນະກຳທີ່ນັບມື້ນັບສູນຫາຍໄປຕາມການເວລາ ແລະ ຄົນເຖົ້າຄົນແກ່ ເຊິ່ງສືບທອດກັນມາແຕ່ບູຮານະການ ສະນັ້ນ ນະໂອກາດນີ້ ຂ້າພະເຈົ້າຫວັງວ່າ ຈະໄດ້ຮັບການຮ່ວມໄມ້ຮ່ວມມື ສະໜັບສະໜູນ ຈາກ ມູນນິທິໂຕໂຍຕ້າ (TOYOTA FOUNDATION) ກໍຄືທ່ານນາງ ເຣໂກ ໂອກາວະ ເຊິ່ງເປັນ

ຜູ້ປະສານງານໂຄງການ ແລະ ເອົາໃຈໃສ່ພວກເຮົາ, ສະນັ້ນ ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ແລະ ສະແດງຄວາມຂອບໃຈມານະໂອກາດນີ້ດ້ວຍ

ສຸດທ້າຍ ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈມາຍັງ ກະຊວງວັດທະນະທຳ, ຫໍສະໝຸດແຫ່ງຊາດ ກໍຄື ໂຄງການໃບລານລາວ ທີ່ຍາມໃດກໍໃຫ້ຄວາມຮ່ວມໄມ້ຮ່ວມມືແກ່ພວກຂ້າພະເຈົ້າ ໃນການສຶກສາຄົ້ນຄວ້າ ຕະຫລອດທັງໃຫ້ທຶນອຸດໜູນການຮຽນຂອງນັກສຶກສາທີ່ຮຽນພາສາລາວ-ວັນນະຄະດີ, ອວຍພອນໃຫ້ບັນດາ ທ່ານ ແຂກທີ່ມີກຽດ ຈົ່ງມີຄວາມສຸກ ປາຖະໜາສິ່ງໃດຈົ່ງປະສົບຜົນສຳເລັດທຸກປະການ.

**ເອກະສານອ້າງອີງ**


- ປຶ້ມວັນນະຄະດີລາວໂດຍສັງເຂບ ຂອງ ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ກະຊວງສຶກສາທິການ
- ຄວາມຊົງຈຳຂອງທ່ານ ພູມີ ວົງວິຈິດ
- ພົງສາວະດານລາວ ກະຊວງສຶກສາ 1972 ໂດຍອາຈານ ມະຫາສິລາ ວິລະວົງ